ກະຊວງການເງິນ
ເລກ...
ວັນທີ 22.2.2019
ເລກທີ 004971
ຜູ້ຮັບ...

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ

ເລກທີ 48 /ລບ

ນະຄອນຫຼວງວຽງຈັນ, ວັນທີ 19. 02. 2019.

# ດຳລັດ

## ວ່າດ້ວຍການລົບລ້າງບາງມາດຕາ ຂອງມະຕິຄົກລົງຂອງສະພາລັດຖະມົນຕີ ສະບັບເລກທີ 47/ປສລ, ລົງວັນທີ 26 ມິຖຸນາ 1989

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 8 ພະຈິກ 2016;
- ອີງຕາມ ມະຕິຕົກລົງຂອງສະພາລັດຖະມົນຕີ ວ່າດ້ວຍລະບອບພາສີອາກອນຂອງລັດ ສະບັບເລກທີ 47/ປສລ, ລົງວັນທີ 26 ມິຖຸນາ 1989;
- ອີງຕາມ ໜັງສືສະເໜີຂອງ ກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 0322/ກຜທ.ລທ4, ລົງວັນທີ 07 ກຸມພາ 2019.

**ລັດຖະບານ ອອກດຳລັດ:**

**ມາດຕາ 1** ລົບລ້າງວັກທີ 2 ມາດຕາ 15 "ກ່ຽວກັບຄ່າບຸລະນະ, ພາສີຊັບພະຍາກອນ ແລະ ຄ່າຊົກພິເສດ" ແລະ ມາດຕາ 16 "ພື້ນຖານຄິດໄລ່ ແລະ ອັດຕາພາສີຊັບພະຍາກອນ" ຂອງມະຕິຕົກລົງຂອງສະພາລັດຖະມົນຕີ ວ່າດ້ວຍລະບອບພາສີອາກອນຂອງລັດ ເລກທີ 47/ປສລ, ລົງວັນທີ 26 ມິຖຸນາ 1989, ເພື່ອບໍ່ໃຫ້ມີການເກັບພາສີ-ອາກອນຊ້ຳຊ້ອນ ແລະ ໃຫ້ສອດຄ່ອງກັບ ລັດຖະບັນຍັດວ່າດ້ວຍລາຍການສິນຄ້າ ແລະ ອັດຕາພາສີຂາອອກ ເລກທີ 002/ປປທ, ລົງວັນທີ 27 ເມສາ 2012; ລັດຖະບັນຍັດວ່າດ້ວຍອັດຕາຄ່າຊັບພະຍາກອນທຳມະຊາດ ເລກທີ 001/ປປທ, ລົງວັນທີ 15 ທັນວາ 2015.

**ມາດຕາ 2** ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ, ບັນດາແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ເພື່ອຈັດຕັ້ງປະຕິບັດ ດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 3** ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຕາງໜ້າລັດຖະບານ,**

**ນາຍົກລັດຖະມົນຕີ**

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ